# ໜັງສືເທຊາໂລນິກທີ ໒

**ໃຈຄວາມສຳຄັນ** ເຖິງສງ່າຣາສີໄດ້ດ້ວຍອົງພຣະຄຣິດ ຫລື ໜັງສືທີ່ເວົ້າເຣື່ອງສັດຕູຂອງອົງພຣະຄຣິດ

**ຈຳນວນບົດ** ໓ ບົດ

## ວ່າດ້ວຍເວລາແລະຄວາມມຸ່ງໝາຍ

ໜັງສືເທຊາໂລນິກທັງສອງສະບັບນີ້ ທ່ານໂປໂລໄດ້ຂຽນທີ່ເມືອງໂກລິນໂທ ຄືໄດ້ຂຽນເມື່ອປີ ຄ.ສ. ໕໒ ມູນເຫດທີ່ພາໃຫ້ເພິ່ນຂຽນກໍ່ມີຫລາຍຢ່າງ ເປັນຕົ້ນວ່າ ພວກພີ່ນ້ອງມີຄວາມເຊື່ອແລະມີຄວາມຫວັງໃຈຫລາຍຂຶ້ນ ບົດ ໑:໓-໔ ແຕ່ໄດ້ເຮັດໃຫ້ເພິ່ນບໍ່ພໍໃຈ ຄືພວກເຂົາໄດ້ເຂົ້າໃຈຜິດກ່ຽວກັບການສະເດັດມາຂອງພຣະເຢຊູຄຣິດ ໂດຍພວກເຂົາເຊື່ອວ່າພຣະອົງຈະສະເດັດມາໃນໄວໆນີ້ ຄືສະເດັດມາກ່ອນທ່ານໂປໂລຕາຍ (໑ ເທຊາໂລນິກ ໔:໑໗) ດັ່ງນັ້ນທ່ານໂປໂລຈິ່ງຂຽນເຕືອນວ່າຢ່າເຊື່ອຜູ້ທີ່ມາບອກວ່າວັນຂອງພຣະອົງໄດ້ມາເຖິງແລ້ວ (໒:໒-໓) ແລະດ້ວຍຄວາມເຊື່ອຢ່າງນັ້ນ ພວກເຂົາຈິ່ງເກີດການວຸ້ນວາຍແລະມີບາງຄົນໄດ້ຢຸດທຳງານ (໓:໑໐–໑໑)

ດ້ວຍເຫດນີ້ ທ່ານໂປໂລຈິ່ງຂຽນໜັງສືສະບັບນີ້ສົ່ງໄປແກ້ຄວາມພ້ອມກັນເລົ້າໂລມໃຈແລະສັ່ງສອນພວກເຂົາໃໝ່

## ວ່າດ້ວຍເນື້ອຄວາມ

໑. ໃນໜັງສືທັງສອງເຫລັ້ມນີ້ ທ່ານໂປໂລໄດ້ຂຽນເຣື່ອງການສະເດັດກັບ

ມາຂອງພຣະເຢຊູຄຣິດ ໃນເຫລັ້ມຕົ້ນ ເພິ່ນໄດ້ບອກເຫດການທີ່ຈະເກີດຂຶ້ນກັບພວກທີ່ເຊື່ອ ຄືຄວາມສຸກແລະຄວາມຂົມເທົາໃຈ ສ່ວນເຫລັ້ມທີສອງ ເພິ່ນໄດ້ບອກເຫດທີ່ຈະເກີດຂຶ້ນ ກັບພວກທີ່ເຊື່ອ ຄືພວກເຂົາຈະຖືກພຣະເຈົ້າຊົງພິພາກສາໂທດ ບົດ ໑:໔–໑໐

໔. ທ່ານໄປໂລໄດ້ບອກວ່າ ກ່ອນເຖິງວັນສະເດັດມາຈະມີເຫດການເຫລົ່ານີ້ເກີດຂຶ້ນກ່ອນຄື :

ກ. ຈະມີການກະບົດ ບົດ ໔:໓

ຂ. ຄົນຊົ່ວຮ້າຍຈະໄດ້ປາກົດແຈ້ງ ບົດ ໔:໓–໔

ຄ. ຄົນຊົ່ວຮ້າຍຈະໃຫ້ຄວາມບາບປາກົດຂຶ້ນຢ່າງຮ້າຍແຮງໂດຍຣິດຂອງຊາຕານ ບົດ ໔:໔–໑໐

ງ. ພຣະເຈົ້າຈະຊົງປ່ອຍໃຫ້ພວກເຂົາຖືກຫລອກລວງແລະບໍ່ເຊື່ອຄວາມຈິງ ບົດ ໔:໑໑–໑໔

໓. ທ່ານໄປໂລໄດ້ບອກໃຫ້ປະຖົມຜູ້ທີ່ບໍ່ເຊື່ອຟັງຄຳສັ່ງສອນຂອງເພິ່ນ ບົດ ໓:໖, ໑໔–໑໕

ແລະບອກໃຫ້ທຸກຄົນທຳງານເພື່ອລ້ຽງຊີບຂອງຕົນ ບົດ ໓:໗–໑໔

## ການແບ່ງເປັນພາກ

### ພາກທີ ໑ ບົດທີ ໑ ວ່າດ້ວຍບຳເໜັດຂອງຄົນໃນວັນສະເດັດມາ

໑. ພຣະພອນຂອງພຣະເຈົ້າ ບົດ ໑:໑–໔

໒. ຄຳໂມທະນາພຣະຄຸນຂອງທ່ານໂປໂລ ບົດ ໑:໓–໔

໓. ການພິພາກສາໃນອັນສະເດັດມາ ບົດ ໑:໕–໑໐

໔. ຄຳອ້ອນວອນຂອງທ່ານໂປໂລ ບົດ ໑:໑໑–໑໒

## ພາກທີ ໒ ບົດທີ ໒ ວ່າດ້ວຍວັນຕັດສິນຂອງພຣະເຈົ້າ

໑. ຈະຍັງບໍ່ສະເດັດມາ ບົດ ໒:໑–໒

໒. ຈະມີເຫດການເກີດຂຶ້ນກ່ອນອັນນັ້ນ ບົດ ໒:໓–໑໒

໓. ຄຳໂມທະນາ ຄຳຕັກເຕືອນແລະຄຳອ້ອນ
ວອນຂອງທ່ານໂປໂລ ບົດ ໒:໑໓–໑໗

## ພາກທີ ໓ ບົດທີ ໓ ວ່າດ້ວຍໜ້າທີ່ຂອງຄຣິສຕຽນ

໑. ຄຳອ້ອນວອນເພື່ອຂ້າໃຊ້ຂອງພຣະອົງ ບົດ ໓:໑–໕

໒. ໃຫ້ໜີອອກຈາກຜູ້ທີ່ເຮັດໃຫ້ແຕກແຍກ ບົດ ໓:໖–໑໕

໓. ການສະແດງຄວາມຄຳນັບ ບົດ ໓:໑໖–໑໘

## ຈົດໝາຍສຳລັບພວກຄຣູສອນ

ໜັງສືທ່ານໂປໂລ ຂຽນໄປຫາ ທ່ານ ຕີໂມເຕ ແລະ ທ່ານ ຕີໂຕ ນັ້ນ ພວກເຮົາເຄີຍເອີ້ນວ່າ "ຈົດໝາຍສຳລັບພວກຄຣູສອນ" ເພາະເນື້ອຄວາມໃນຈົດໝາຍນີ້ເຕັມໄປດ້ວຍຫລັກການປະພຶດ ແລະໜ້າທີ່ການງານຂອງພວກຄຣູສອນໃນຄຣິສຕະຈັກ

## ວ່າດ້ວຍເວລາແລະສຖານທີ່ຂຽນ

ເມື່ອທ່ານໂປໂລອອກຈາກຄຸກທີ່ກຸງໂຣມແລ້ວ ເພິ່ນໄດ້ທ່ອງທ່ຽວໄປ ປ່າວປະກາດແລະປ່ຽມຢາມ ຄຣິສຕະຈັກ ໃນທີ່ຕ່າງ ໆ ເປັນເວລາສາມປີ ດັ່ງເພິ່ນເຄີຍເວົ້າວ່າ ຢາກໄປຢາມພວກພີ່ນ້ອງທີ່ເມືອງໂກໂລດ (ຟີເລໂມນ) ແລະເມືອງຟີລິບປອຍ (ຟີລິບປອຍ ໒:໒໔)

ເມື່ອທ່ານໂປໂລກັບທ່ານຕີໂຕໄປເຖິງເກາະກະເຣເຕ (ກະເລັດ) ທ່ານ ໂປໂລ ໄດ້ແຕ່ງຕັ້ງ ໃຫ້ທ່ານ ຕີໂຕ ເອົາ ທຳງານ ໃນ ຄຣິສຕະຈັກ ທີ່ນັ້ນ (ຕີໂຕ ໑:໕) ແລະແຕ່ງຕັ້ງໃຫ້ທ່ານຕີໂມເຕຢູ່ໃນເມືອງເອເຟດ (໑ ຕີ-ໂມເຕ ໑:໑–໓) ເມື່ອທຳໜ້າທີ່ເປັນຜູ້ປ່າວປະກາດແລະສັ່ງສອນພວກຄຣິສຕະຈັກ ແລ້ວທ່ານໂປໂລໄດ້ເດີນທາງໄປຍັງແຂວງມາເກໂດເນັຍ ຢູ່ທີ່ນັ້ນເພິ່ນໄດ້ຂຽນຈົດໝາຍສບັບແຮກໄປຫາທ່ານຕີໂມເຕວ່າເມື່ອປີ ຄ.ສ. ໖໔ ຕໍ່ມາເພິ່ນໄດ້ຂຽນຈົດໝາຍໄປຫາທ່ານຕີໂຕຢູ່ເກາະກະເຣເຕ ເມື່ອບອກທ່ານຕີໂມເຕວ່າ ເພິ່ນຈະໄປເມືອງນີໂກໂປລີແລະຢາກຈະພົບທ່ານຕີໂຕຢູ່ທີ່ນັ້ນ (ຕີໂຕ ໓:໑໒)

ຕໍ່ມາທ່ານໂປໂລໄດ້ຖືກຄຸກອີກເປັນຄັ້ງທີ່ສອງ ແລະໃນເທື່ອນີ້ເພິ່ນໄດ້ຂຽນຈົດໝາຍສບັບທີສອງໄປຫາທ່ານຕີໂມເຕ ເມື່ອປີ ຄ.ສ. ໖໖ ແລ້ວຫລັງຈາກນັ້ນບໍ່ເຫິງເພິ່ນກໍສິ້ນຊີວິດ

ສະນັ້ນຈຶ່ງເຫັນໄດ້ວ່າ ທ່ານໂປໂລໄດ້ຂຽນຕີໂມເຕທີ ໑ ແລະໜັງສືຕີໂຕຢູ່ທີ່ແຂວງມາເກໂດເນັຍ ເມື່ອປີ ຄ ສ. ໖໔–໖໕ ແລະໄດ້ຂຽນຕີໂມເຕທີສອງ ເວລາເພິ່ນຖືກຄຸກຄັ້ງທີສອງຢູ່ກຸງໂຣມເມື່ອປີ ຄ.ສ. ໖໖